ບ້ານມາຂ່າ





ການວາງແຜນຮ່ວມກັບຊຸມຊົນ

ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງ ປະຊາຊົນ ເມືອງພູກູດ (PICRAIL) ມີຈຸດປະສົງແນ່ໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໂດຍລວມ, ການ ພັດທະນາຊົນນະບົດ, ແລະ ການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ ໂດຍການເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ຜ່ານ ການຜະລິດກະສິກຳສະອາດ, ປອດໄພ, ຍືນຍົງ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ.

ໃນເດືອນ ມີຖຸນາ 2019 ຜ່ານມາ ໂຄງການ PICRAIL ໄດ້ລົງວາງແຜນຮ່ວມກັບປະຊາຊົນບ້ານມາຂ່າ ເພື່ອສຶກສາຄວາມ ຕ້ອງການ ແລະ ສ້າງແຜນຈັດຕັ້ງປະຕິບັດຮ່ວມກັບຊຸມຊົນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 28 ຄົນ (ຍິງ 7 ຄົນ) ແລະ ສາມາດສັງລວມຂໍ້ມູນໄດ້ 6 ດ້ານຫຼັກຄື:



ໝາຍເຫດ: ຂໍ້ມູນນີ້ແມ່ນອີງໃສ່ຄວາມຮູ້, ຄວາມເຂົ້າໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ເຊິ່ງອາດຈະຄາດເຄື່ອນ ຈາກຂໍ້ມູນທາງການ ແຕ່ກໍສະແດງໃຫ້ເຫັນມຸມມອງຂອງຊຸມຊົນກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ ແລະ ການ ສະເໜີຂອງຊຸມຊົນ

ADRA

german cooperation
DEUTSCHE ZUSAMMENARBEIT

ອົງການ ອາດຣາ (ADRA) ພາຍໃຕ້ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງ ປະຊາຊົນ ເມືອງພູກູດ, ແຂວງຊຽງຂວາງ (PICRAIL) ໄດ້ຈັດຕັ້ງປະຕິບັດກິດຈະກຳ ການວາງແຜນແບບມີສ່ວນຮ່ວມກັບຊຸມຊົນ ຈຳນວນ 16 ບ້ານເປົ້າໝາຍ. ຜູ້ເຂົ້າຮ່ວມລວມມີຊາວກະສິກອນ, ອຳນາດການປົກຄອງບ້ານ, ຜູ້ນຳຊຸມຊົນ, ແມ່ຍິງ, ຄອບຄົວຄົນພິການ, ຄອບຄົວແມ່ຮ້າງນາງໝ້າຍ, ຄອບຄົວທຸກຍາກ, ທີມງານໂຄງການ ແລະ ພະນັກງານ-ວິຊາການຈາກຫ້ອງການລັດທີ່ກ່ຽວຂ້ອງ. ການວາງແຜນຮ່ວມກັບຊຸມຊົນຄັ້ງນີ້ເປັນການເກັບຂໍ້ມູນທັງທາງປະລິມານ ແລະ ຄຸນນະພາບ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ, ຄວາມປາຖະໜາ, ແລະ ທາງອອກຂອງຊຸມຊົນ ເພື່ອນຳໄປປະກອບເປັນແຜນຈັດຕັ້ງປະຕິບັດໂຄງການ. ກິດຈະກຳນີ້ບໍ່ອາດເປັນໄປໄດ້ຖ້າປາສະຈາກຄູ່ຮ່ວມງານຕ່າງໆ ເຊັ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູກູດ, ໜ່ວຍງານນ້ຳສະອາດ, ຫ້ອງການສະຫະພັນແມ່ຍິງ, ສະມາຄົມຄົນພິການແຫ່ງຊາດລາວ (LDPA), ສະມາຄົມ ພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA), ປະຊາຊົນບ້ານເປົ້າໝາຍ, ແລະ ທີມງານໂຄງການ. ນອກຈາກນີ້ ອົງການ (ADRA) ຂໍຂອບໃຈ ແລະ ສະແດງຄວາມຮູ້ບຸນຄຸນໄປຍັງຜູ້ໃຫ້ທຶນ ກໍຄື BMZ ແລະ ອົງການ ອາດຣາ ເຢຣະມັນ ລວມທັງຄູ່ຮ່ວມງານອື່ນໆສຳລັບການສະໜັບສະໜູນກິດຈະກຳໃນຄັ້ງນີ້ດ້ວຍ.

ບ້ານນາຂ່າ

ທີ່ຕັ້ງບ້ານນາຂ່າ ເມືອງພູກູດ ແຂວງຊຽງຂວາງ



- ທິດເໜືອຕິດກັບບ້ານລ້ອງຄານ
- ທິດໃຕ້ຕິດກັບບ້ານມີໃຊ
- ທິດຕາເວັນອອກຕິດກັບບ້ານຍອດແພ
- ທິດຕາເວັນຕົກຕິດກັບບ້ານພູວຽງ

ການຊ່ວຍເຫຼືອ

- ທີ່ຜ່ານມາມີອົງການ/ໂຄງການໄດ້ເຂົ້າມາຊ່ວຍເຫຼືອທາງບ້ານ ຄື **ADRA** (ກິດຈະກຳໂພຊະນາການ)

ການນຳໃຊ້ນ້ຳຂອງບ້ານ

- ປະຊາຊົນບ້ານນາຂ່ານຳໃຊ້ນ້ຳລິນເຂົ້າໃນການດຳລົງຊີວິດ ແຕ່ທີ່ຜ່ານມາແມ່ນມີນ້ຳໃຊ້ບໍ່ພຽງພໍກັບການຊົມໃຊ້ຂອງຄົນໃນຊຸມຊົນ

ການຄົມມະນາຄົມ

- ເສັ້ນທາງເຂົ້າເຖິງບ້ານແມ່ນມີຄວາມຫຍຸ້ງຍາກ ເຊິ່ງລົດສາມາດເຂົ້າໄດ້ສະດວກໃນລະດູແລ້ງເທົ່ານັ້ນ

ຄວາມຈຳເປັນ ແລະ ຂໍ້ຫຍຸ້ງຍາກ

1) ນ້ຳໃຊ້ບໍ່ພຽງພໍ, ນ້ຳບໍ່ສະອາດ ເນື່ອງຈາກປະຊາຊົນບາງຄອບຄົວນຳໃຊ້ສານເຄມີທຳການຜະລິດຢູ່ເທິງແຫຼ່ງນ້ຳ
2) ຄົນພິການພາຍໃນບ້ານຍັງບໍ່ໄດ້ຮັບການເອົາໃຈໃສ່ຈາກສັງຄົມເທົ່າທີ່ຄວນ
3) ແມ່ຍິງພາຍໃນບ້ານສ່ວນຫຼາຍເຮັດຫຼາຍໜ້າວຽກ ເຮັດໃຫ້ບໍ່ມີເວລາເບິ່ງແຍງ ແລະ ພັດທະນາຕົນເອງ
4) ໄພພິບັດທາງທຳມະຊາດທຳລາຍຜົນລະປູກ ແລະ ຊັບສິນຂອງປະຊາຊົນ
5) ປະຊາຊົນຍັງມີຄວາມຮູ້ຈຳກັດດ້ານການປູກຝັງ ແລະ ລ້ຽງສັດ, ເຕັກນິກການປູກ/ລ້ຽງ, ວິທີປ້ອງກັນພະຍາດ ແລະ ວິທີການຮັບມືກັບບັນຫາທີ່ເກີດຂຶ້ນ
6) ເຕັກນິກການຕະຫຼາດຍັງຕ່ຳ ແລະ ບໍ່ມີຕະຫຼາດຈຳໜ່າຍຜົນຜະລິດກະສິກຳຢູ່ບໍລິເວນໃກ້ຄຽງ
7) ການຄຸ້ມຄອງຊັບພະຍາກອນທຳມະຊາດເຮັດບໍ່ໄດ້ດີປານໃດ

ຂໍ້ສະເໜີ ຂໍຄວາມຊ່ວຍເຫຼືອ

1) ປັບປຸງນ້ຳລິນ
2) ເຝິກອົບຮົມດ້ານສະຕະວະແພດ, ເຕັກນິກການປູກຝັງ ແລະ ລ້ຽງສັດ

ປະຊາກອນ

ລວມ ມາຂ່າ ປະຊາກອນ

323

ເພດຍິງ 163


ເພດຊາຍ 160

ຄອບຄົວ



ຄົນພິການ

ຄົນພິການທັງໝົດ 8 ຄົນ



2 ພິການສາຍຕາ
1 ພິການຫູ/ຄໍ
5 ພິການແຂນ/ຂາ

ການປະກອບອາຊີບ



100%
ຊາວກະສິກອນ
ລາຍໄດ້ຕົ້ນຕໍ: ຂາຍຜົນລະປູກ

ສິ່ງອຳນວຍຄວາມສະດວກ

- ມີໂຮງຮຽນ
- ມີໄຟຟ້າທີ່ສະດວກ
- ມີຫ້ອງການປົກຄອງບ້ານ
- ມີສັນຍານໂທລະສັບສາມາດຕິດຕໍ່ກັບໂລກພາຍນອກໄດ້
- ມີຮ້ານຂາຍເຄື່ອງ

ຄົນພິການທັງໝົດ 8 ຄົນ



ຄົນພິການທີ່ເປັນບູລິມະສິດຂອງໂຄງການ 6 ຄົນ

- ຊື່
- ວັນເດືອນປີເກີດ
- ຄວາມພິການ
- ວຽກທີ່ຕ້ອງການເພື່ອສ້າງລາຍຮັບ
- ເຫດຜົນ
- ຈຸດດີ
- ຈຸດອ່ອນ
- ໂອກາດ
- ອຸປະສັກ
- ຜູ້ຫຼັກໃນການເຮັດກິດຈະກຳ



- ທ້າວ ບົວລາ ມະນີລາ
- 15/12/1997
- ຕາບອດເບື້ອງຂວາ, ມີເບື້ອງຊ້າຍຄົດ
- ລ້ຽງງົວ
- ລ້ຽງງ່າຍ, ຄິດວ່າສ້າງລາຍໄດ້ໃຫ້ຄອບຄົວ
- ມີຄ້ຳລ້ຽງ ແລະ ຄອກ
- N/A
- N/A
- N/A
- ໂຕເອງ, ພໍ່, ແມ່



- ທ້າວ ແອ໊ອຍ
- 13/04/2005
- ຂາ2ເບື້ອງ (ແລ່ນບໍ່ໄດ້)
- ລ້ຽງງົວ, ໝູ
- N/A
- ມີສະຖານທີ່ເປັນຂອງຕົນ
- ບໍ່ທັນມີປະສົບການ, ຂາດທຶນຮອນ
- ເປັນສັດທີ່ນິຍົມກັນລ້ຽງ, ມີພໍ່ຄ້າມາຊື້ເປັນປະຈຳ
- ບໍ່ມີຄວາມຮູ້ໃນການລ້ຽງສັດ ແລະ ການສັກຢາກັນພະຍາດ
- N/A



- ທ້າວ ສອນໄຊ ມະນີຈັນທະວົງ
- 09/09/2009
- ຂາເບື້ອງຂວາຫົດ, ແຍ່ງ
- ລ້ຽງງົວ
- ລ້ຽງງ່າຍ, ໄດ້ຂາຍດີ
- ມີສະຖານທີ່, ມີຄອກ, ມີແຮງງານ
- N/A
- N/A
- N/A
- ພໍ່,ແມ່,ລູກ



- ນາງ ຈັນລາ ອິນທອງ
- 05/05/1989
- ຂາເບື້ອງຂວາຂັດ
- N/A
- ລ້ຽງງ່າຍ
- ບ່ອນລ້ຽງ, ແຮງງານ
- N/A
- N/A
- N/A
- ພໍ່,ແມ່



- ທ້າວ ໄມຄຳ ກາວາຍ
- 02/02/2006
- ແຂນທັງສອງຄົດກະດູກອ່ອນຍົກໝັກບໍ່ໄດ້, ຕາເລ່ວ, ປາກເວົ້າບໍ່ແຈ້ງ
- ລ້ຽງງົວ
- ຍ້ອນເຄີຍລ້ຽງມາແລ້ວຢາກຂະຫຍາຍຕື່ມ
- ອື່ນ
- ມີພື້ນທີ່ເໝາະສົມ
- ບໍ່ເຄີຍໄດ້ຮັບການຝຶກອົບຮົມໃດໆມາກ່ອນ
- ມີຕະຫລາດຮອງຮັບ
- ມີພະຍາດລະບາດບາງລະດູການ
- ພໍ່,ແມ່,ອ້າຍ



- ທ້າວ ວັນຄຳ
- 15/02/2009
- ຕົ້ນຂໍ 2 ເບື້ອງ
- ລ້ຽງງົວ, ໝູ
- ເພື່ອສ້າງລາຍຮັບໃຫ້ແກ່ຜູ້ເສຍອົງຄະ
- ມີສະພາບແວດລ້ອມອຳນວຍຄວາມສະດວກແກ່ການລ້ຽງ
- ບໍ່ທັນມີປະສົບການໃນການລ້ຽງ
- ມີພໍ່ຄ້າມາຊື້ເປັນປະຈຳ
- ບາງປີມີພະຍາດສັດລະບາດ, ໄພທຳມະຊາດ
- ພໍ່

NOTE

ການຄັດເລືອກບູລິມະສິດ ແມ່ນອີງໃສ່ການປະເມີນ ແລະ ຄຳແນະນຳຂອງ ສະມາຄົມຄົນພິການ ແຫ່ງຊາດລາວ ແລະ ທ່າ ແຮງຂອງຄົນພິການ


ບົດບາດຍິງ-ຊາຍ

ກິດຈະວັດປະຈຳວັນ



ຍິງ		ຊາຍ
ນອນ 6h		8h ນອນ
ພັກຜ່ອນ 1h		3h ພັກຜ່ອນ
ເຮັດວຽກເຮືອນ 8h		5h ເຮັດວຽກເຮືອນ
ເຮັດວຽກ/ອອກແຮງງານ 9h		8h ເຮັດວຽກ/ອອກແຮງງານ

ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ



• ໂດຍທົ່ວໄປແລ້ວແມ່ຍິງເປັນຜູ້ກຳເງິນ ແລະ ແບ່ງໃຫ້ຜູ້ຊາຍໃຊ້ໃນສິ່ງຈຳເປັນ ເຊິ່ງປົກກະຕິແລ້ວຜູ້ຊາຍຈະໃຊ້ເງິນເພື່ອຕົນເອງ ຫຼື ງານສັງຄົມ ແລະ ຜູ້ຍິງນຳໃຊ້ເພື່ອຄອບຄົວຫຼາຍກວ່າ

ການເຂົ້າເຖິງ

• ສຳລັບການເຂົ້າເຖິງຊັບພະຍາກອນ ເຫັນວ່າຊັບສິນຫຼາຍຢ່າງແມ່ນທັງຍິງ ແລະ ຊາຍໄດ້ນຳໃຊ້ຮ່ວມກັນ
• ເນື່ອງຈາກມີການແບ່ງວຽກຍິງ-ຊາຍຢ່າງຊັດເຈນ ພາຫະນະໃຫຍ່ ເຊັ່ນ ລົດໃຫຍ່, ເຄື່ອງຫາປາ, ເຄື່ອງທຳການຜະລິດໝັກ ແມ່ນຜູ້ຊາຍເປັນຜູ້ຊົມໃຊ້

ການຄວບຄຸມ

• ສຳລັບການຄວມຄຸມຊັບພະຍາກອນແມ່ນຄ້າຍຄືກັບການເຂົ້າເຖິງ ກໍຄືທັງຍິງແລະຊາຍຈະຄວບຄຸມຊັບສິນທີ່ມີລາຄາບໍ່ສູ້ງ ແຕ່ສຳລັບຊັບສິນທີ່ມີລາຄາສູງ ແມ່ນທັງຍິງແລະຊາຍຕ້ອງໄດ້ຕັດສິນໃຈຮ່ວມກັນ

ບັນຫາ ແລະ ສິ່ງທ້າທາຍ

ຄວາມຫລຸດໂຕນໃນການເຮັດວຽກຕ່າງໆ ເຮັດໃຫ້ແມ່ຍິງບໍ່ມີເວລາເບິ່ງແຍງ ແລະ ພັດທະນາຕົນເອງເທົ່າທີ່ຄວນ

ແມ່ຍິງມີຄວາມທ້າທາຍຕ່ຳໃນການສະແດງອອກ ສົນທະນາ ແລະ ປະກອບຄຳຄິດຄຳເຫັນ

ຂໍ້ສະເໜີ

• ກຸ່ມແມ່ຍິງຢາກໃຫ້ຜູ້ຊາຍຊ່ວຍວຽກຕ່າງ ເຊັ່ນ ແຕ່ງກິນ, ໄປຕັກນ້ຳ, ເອົາລູກ, ແລະ ກວາດເຮືອນ

• ຈັດຝຶກອົບຮົມບົດບາດຍິງຊາຍໃຫ້ແກ່ຊຸມຊົນ

ການປູກຝັງ

ລວມ ບ້ານມາຂ່າ ເນື້ອທີ່ທຳການຜະລິດ

16 ເຮັກຕາ	35 ເຮັກຕາ	12 ເຮັກຕາ
ນາ	ໄຮ່ໝູນວຽນ	ສວນ

ນາ ແມ່ນນຳໃຊ້ນ້ຳຝາຍ
ໄຮ່ ແມ່ນນຳໃຊ້ນ້ຳຝົນ
ສວນ ແມ່ນນຳໃຊ້ນ້ຳຫ້ວຍ ແລະ ນ້ຳຝົນ

ເດືອນທີ່ເໝາະສົມແກ່ການປູກພືດ



5-7
ກ້ວຍ, ອ້ອຍ, ໝາກນັດ...



5-12
ເຂົ້ານາ, ເຂົ້າໄຮ່, ສາລີ



11-3
ກະລ່ຳປີ, ກະທຽມ...



5-8
ຕົ້ນໄມ້ໃຫ້ໝາກ



5-11
ໝາກເຜັດ, ໝາກເຂືອ, ອຶ, ໂຕນ, ແຕງ, ປະເພດມັນ, ໝາກງາ, ຖົ່ວດິນ...



11-5
ຜັກສວນຄົວ



5-10
ປູກຫຍ້າ...

ບັນຫາໃນການປູກພືດ

ເຂົ້ານາ	ເຂົ້າໄຮ່	ພືດສວນຄົວ	ພືດເສດຖະກິດ
ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ
ນ້ຳບໍ່ພຽງພໍ	ໄພທຳມະຊາດ	ນ້ຳບໍ່ພຽງພໍ	ໄພທຳມະຊາດ
ໄພທຳມະຊາດ		ໄພທຳມະຊາດ	
		ປູກຍາກໃນໄລຍະຖຸຝົນ	

ການບໍລິໂພກ

• ເຂົ້າ ແລະ ພືດຜັກທີ່ຊາວບ້ານກິນຢູ່ທຸກວັນນີ້ສ່ວນໃຫຍ່ມາຈາກການປູກກິນເອງ ແລະ ຊື້ກິນບາງຄັ້ງຄາວ

ເຕັກນິກການປູກພືດ



ທີ່ຜ່ານມາເຫັນວ່າປະຊາຊົນມີການນຳໃຊ້ຝຸ່ນທຳມະຊາດ ປະສົມປະສານກັບການນຳໃຊ້ຝຸ່ນເຄມີເຂົ້າໃນການຜະລິດ

ການປູກຝັງ

ສັງລວມບັນຫາຂອງການປູກຝັງ



ໄພທຳມະຊາດ (ຝົນຕົກໜັກ, ແຫ້ງແລ້ງ, ແລະ ດິນເຈື່ອນ)



ຂາດເຕັກນິກໃນການປູກພືດ ໂດຍສະເພາະການປູກຜັກໃນລະດູຝົນ



ມີສັດສັດຕູພືດທຳລາຍຜົນລະປູກ



ຂາດຕະຫຼາດຈຳໜ່າຍ ແລະ ເຕັກນິກການຕະຫຼາດ



ຂາດການຄຸ້ມຄອງການຜະລິດແບບເປັນກ້ອນກຸ່ມ




ເສັ້ນທາງບໍ່ສະດວກ

ຂໍ້ສະເໜີ

- ຈັດເຝິກອົບຮົມວິທີການປ້ອງກັນ ແລະ ຮັບມືກັບໄພທຳມະຊາດ
- ຝຶກອົບຮົມເຕັກນິກການປູກ, ເຮັດຝຸ່ນບົ່ມ, ຝຸ່ນຊີວະພາບ ແລະ ຝຶກອົບຮົມວິທີຜະລິດຢາຂັບໄລ່ແມງໄມ້ ແລະ ຢາປາບສັດຕູພືດແບບຊີວະພາບ
- ເຝິກອົບຮົມເຕັກນິກການປູກພືດໃນລະດູຝົນ (ເຮືອນຮົ່ມ) ແລະ ການຂະຫຍາຍຕົ້ນໝາກໄມ້ ພ້ອມທັງສະໜອງອຸປະກອນ ໂດຍຄຳນຶງເຖິງສິ່ງທ້າທາຍຕ່າງໆ
- ເຝິກອົບຮົມ ແລະ ຈັດຕັ້ງກຸ່ມກະສິກຳ
- ກຳນົດຕະຫຼາດຈຳໜ່າຍ, ເຊື່ອມຕໍ່ກຸ່ມກະສິກຳກັບຕະຫຼາດຈຳໜ່າຍ ແລະ ເຝິກອົບຮົມດ້ານການຕະຫຼາດໃຫ້ປະຊາຊົນ

ການລ້ຽງສັດ

ຈຳນວນສັດພາຍໃນບ້ານ



ເນື້ອທີ່ການລ້ຽງສັດ

- ທົ່ງຫຍ້າລ້ຽງສັດທັງໝົດ 30 ຮຕ
- ໝອງປາຍັງບໍ່ບຸກເບີກ 30 ໝອງ, ມີເນື້ອທີ່ 0,5 ເຮັກຕາ



ພາຍໃນບ້ານບໍ່ມີສັດຕະວະແພດປະຈຳບ້ານ ແຕ່ເຖິງຢ່າງໃດກໍຕາມທີ່ຜ່ານມາງົວຄວາຍຂອງຊາວບ້ານແມ່ນເຄີຍໄດ້ຮັບການຊຸກຍູ້ປ້ອງກັນພະຍາດມາກ່ອນ

ເດືອນທີ່ເໝາະສົມໃນການລ້ຽງສັດ

ສັດ	ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ
ງົວ												
ຄວາຍ												
ແບ້												
ປາ												
ເປັດ-ໄກ່												
ໝູ												

ເຕັກນິກ ແລະ ບັນຫາໃນການລ້ຽງສັດ

	ເຕັກນິກ	ບັນຫາ
ງົວ, ຄວາຍ	ລ້ຽງແບບປ່ອຍຫາກິນຕາມທຳມະຊາດ, ລຽງໃສ່ຄັ້ງລວມໝູ, ລະດູຝົນປ່ອຍເຂົ້າຄັ້ງ, ລະດູແລ້ງປ່ອຍຫາກິນຕາມທຳມະຊາດ	ງົວ-ຄວາຍຕາຍ, ທົ່ງຫຍ້າມີຈຳນວນຈຳກັດ, ຫຍ້າບໍ່ພຽງພໍ, ຢາປ້ອງພະຍາດສັດມີຈຳກັດ, ບໍ່ມີຄວາມຮູ້ດ້ານສັດຕະວະແພດ ແລະ ພະຍາດລະບາດເລື້ອຍໆ
ໝູ	ລ້ຽງແບບຂັງໃສ່ຄອກ	ໝູຕາຍ, ຢາປ້ອງພະຍາດສັດມີຈຳກັດ, ບໍ່ມີຄວາມຮູ້ທາງດ້ານສັດຕະວະແພດ ແລະ ພະຍາດລະບາດເລື້ອຍໆ
ປາ	ລ້ຽງໃສ່ໝອງດິນໃຫ້ປາຫາກິນຕາມທຳມະຊາດ ແລະ ໃຫ້ອາຫານບາງຄັ້ງຄາວ	ປາຕາຍບໍ່ຮູ້ສາເຫດ, ປາມີການຈະເລີນເຕີບໂຕຊ້າ ແລະ ໄພທຳມະຊາດທຳລາຍໝອງປາ

ການສັດລ້ຽງ

ສ່ງລວມຂໍ້ສະດວກ ແລະ ເງື່ອນໄຂໃນການລ້ຽງສັດ



- ມີພື້ນທີ່ລ້ຽງສັດທີ່ເໝາະສົມ
- ມີທົ່ງຫຍ້າທຳມະຊາດເພື່ອຮັບຮອງ ແລະ ບັນເທົາທາງດ້ານອາຫານສັດໃນລະດູແລ້ງ



- ມີແຫຼ່ງນ້ຳ, ຫ້ວຍນ້ຳ

ສ່ງລວມບັນຫາ ແລະ ຂໍ້ຫຍຸ້ງຍາກ



- ພະຍາດມັກເກີດຂຶ້ນກັບສັດລ້ຽງໃນທຸກໆປີ.



- ປະຊາຊົນບາງຄອບຄົວບໍ່ມີຕົ້ນທຶນໃນການລ້ຽງ



- ທົ່ງຫຍ້າມີຈຳກັດ



- ຄວາມຮູ້ທາງດ້ານເຕັກນິກການລ້ຽງສັດຍັງຕ່ຳ ແລະ ບໍ່ສາມາດຜະລິດເປັນສິນຄ້າໄດ້
- ປະຊາຊົນຍັງຂາດຄວາມເອົາໃຈໃສ່ໃນການເບິ່ງແຍງສັດລ້ຽງຂອງຕົນ
- ປະຊາຊົນບໍ່ມີຄວາມຮູ້ດ້ານສະຕະວະແພດ ແລະ ສັດລ້ຽງບໍ່ໄດ້ຮັບການສັກຢາປ້ອງກັນພະຍາດເປັນປົກກະຕິ

ຂໍ້ສະເໜີ

- ເຝິກອົບຮົມການດູແລສຸຂະພາບສັດ, ເຝິກອົບຮົມສັດຕະວະແພດ, ສັກຢາປ້ອງກັນສັດຕາມເວລາທີ່ກຳນົດ ແລະ ຕໍ່ເນື່ອງ.
- ຂັ້ນບ້ານຄວນກຳນົດລະບຽບການຄຸ້ມຄອງສັດຂັ້ນບ້ານ
- ສະໜອງສັດ ແລະ ແກ່ນຫຍ້າໃຫ້ຄອບຄົວທຸກຍາກ.
- ເຝິກອົບຮົມເຕັກນິກການລ້ຽງສັດ, ການຄຸ້ມຄອງສວນຫຍ້າ ແລະ ຈັດຕັ້ງກຸ່ມລ້ຽງສັດ
- ຈຳກັດບໍ່ໃຫ້ເຄື່ອນຍ້າຍສັດເຂົ້າ-ອອກໃນເວລາສັດເປັນພະຍາດ.
- ຕິດຕາມການສັກຢາປ້ອງກັນພະຍາດສັດໃຫ້ຖືກຕ້ອງຕາມລະດູການ

ອາຫານຈາກທຳມະຊາດ

ປະຕິທິນອາຫານຈາກທຳມະຊາດ ຫຼື ເຄື່ອງປ່າຂອງດົງ

1-12
ໝໍ່ບຸ່ນ, ໝໍ່ຫວາຍ, ໝາກປີ, ດອກເຜົ້ງ, ປອມ 30, ປູ, ປາ, ກົບ

3-5
ຜັກຫວານ

3-9
ເຫັດ, ຜັກເນົ່າ

3-5
ນ້ຳເຜົ້ງ

5-9
ໝໍ່

6-10
ຕໍ່

10-3
ໄຄ

ເດືອນທີ່ສາມາດຫາອາຫານໄດ້
ທັງຍິງແລະຊາຍເປັນຜູ້ໄປເອົາ
ຜູ້ຊາຍເປັນຜູ້ໄປເອົາ
ຜູ້ຍິງເປັນຜູ້ໄປເອົາ

ມີແຕ່ກົນ
ມີແຕ່ຂາຍ
ທັງກົນແລະຂາຍ

ບັນຫາໃນການຫາອາຫານຈາກທຳມະຊາດ

ປະຊາກອນເພີ່ມຂຶ້ນ, ການຫາກິນແບບດັບສູນ ເຮັດໃຫ້ອາຫານນັບມື້ນັບໜ້ອຍລົງ

ປ່າໄມ້ຖືກທຳລາຍ

ໄພທຳມະຊາດ (ຝົນຕົກໜັກ, ແຫ້ງແລ້ງ, ແລະ ດິນເຈື່ອນ)

ບໍ່ມີການຊອກຫາວິທີປູກ ຫຼື ຂະຫຍາຍພັນທົດແທນ

ວິທີການແກ້ໄຂ

ອະນຸລັກຕົ້ນໄມ້ ແລະ ປູກປ່າທົດແທນ

ຫັນມາປູກຝັງ ແລະ ລ້ຽງສັດເພື່ອລ້ຽງຊີບ ແລະ ສ້າງເສດຖະກິດ

DO'S

- ສ້າງກົດລະບຽບເພື່ອສະຫງວນທຳມະຊາດຂັ້ນບ້ານ
- ສ້າງກົດລະບຽບຂັ້ນບ້ານ ເພື່ອກຳນົດເຂດຫາກິນສຳລັບແຕ່ລະປີ ແລະ ຫ້າມບໍ່ໃຫ້ລ່າສັດໃນລະດູຂະຫຍາຍພັນ

DON'TS

ຊອກຫາວິທີປູກ ຫຼື ຂະຫຍາຍພັນເຄື່ອງປ່າຂອງດົງ

ລາຄາສິນຄ້າພາຍໃນບ້ານ

ລາຄາຜົນລະປູກ



ເຂົ້າເປືອກ
3-3,500
ກີບ/ກິໂລ




ຖົ່ວດິນ
1,200
ກີບ/ກິໂລ



ສາລີ
1,000
ກີບ/ກິໂລ



ເຂົ້າສານ
5,000
ກີບ/ກິໂລ



ໝາກແຕງ
1,000
ກີບ/ກິໂລ



ໝາກອຶ
1,000
ກີບ/ກິໂລ



ໝາກເຜັດດິບ
15,000
ກີບ/ກິໂລ



ໝາກເຜັດແຫ້ງ
40,000
ກີບ/ກິໂລ



ກະລ່ຳປີ
3-5,000
ກີບ/ຫົວ

ລາຄາສັດ ແລະ ຊີ້ນສັດ



ງົວ
4,500,000
ກີບ/ໂຕ



ຊີ້ນງົວ
50,000
ກີບ/ກິໂລ



ປາເກັດລ້ຽງ
20-25,000
ກີບ/ກິໂລ



ໝູນ້ອຍ
200,000
ກີບ/ໂຕ



ຊີ້ນໝູ
35,000
ກີບ/ກິໂລ



ຊີ້ນໄກ່
35,000
ກີບ/ກິໂລ



ປາໜັງ
30,000
ກີບ/ກິໂລ

ການຜະລິດປ້ອນຕະຫຼາດ

ເຂົ້າ	11,6 ໂຕນ/ປີ	ງົວ-ຄວາຍ	30 ໂຕ/ປີ
ຜັດຜັກ	700 ກິໂລ/ປີ	ໝູ	15 ໂຕ/ປີ
ສາລີ	3 ໂຕນ/ປີ	ໄກ່	120 ກິໂລ/ປີ
ເປັດ	30 ກິໂລ/ປີ		

ທ່າແຮງ ແລະ ຂໍ້ຫຍຸ້ງຍາກ

ທ່າແຮງ

1. ມີຫ້ວຍນ້ຳຢູ່ໃກ້ບ້ານ
2. ໄມ້ໃຫ້ໝາກໃຫ້ຜົນຜະລິດດີ
3. ມີດິນສວນປູກໄມ້ໃຫ້ໝາກ ແລະ ຜັກສວນຄົວ
4. ໄມ້ໃຫ້ໝາກໃຫ້ຜົນຜະລິດດີ
5. ມີປ່າໄມ້ປ້ອງກັນ
6. ມີນາຢູ່ໃກ້ບ້ານ
7. ມີໄຮ່ໝູນວຽນ
8. ມີໝອງລ້ຽງປາຢູ່ໃກ້ບ້ານ
9. ປະຊາຊົນມີມູນເຊື້ອຄຸໝັ່ນ
10. ມີໂຮງຮຽນ ແລະ ເດັກນ້ອຍໄດ້ຮັບການສຶກສາ
11. ມີໄຟຟ້າຊົມໃຊ້
12. ມີເສັ້ນທາງເຂົ້າເຖິງບ້ານ
13. ອຳນາດການປົກຄອງບ້ານມີຄວາມເຂັ້ມແຂງ
14. ມີຕະຫຼາດຮອງຮັບສັດລ້ຽງ ແລະ ເຂົ້າ
15. ຄວາມສະເໝີພາບຍິງ-ຊາຍຂ້ອນຂ້າງດີ
16. ມີສັນຍານໂທລະສັບສາມາດປະສານງານກັບພາຍນອກໄດ້
17. ມີ 1 ຄຸ້ມ ງ່າຍສຳລັບການເຕົ້າໂຮມປະຊາຊົນ

ຂໍ້ຫຍຸ້ງຍາກ

1. ສວນໄມ້ໃຫ້ໝາກຍັງບໍ່ທັນຂະຫຍາຍຕົວເນື່ອງຈາກບໍ່ມີຕະຫຼາດ
2. ຜັກສວນຄົວຜະລິດໄດ້ພຽງລະດູດຽວ, ເຮັດເພື່ອກິນເທົ່ານັ້ນ, ບໍ່ມີຜັກກິນໃນລະດູຝົນ
3. ເຕັກນິກການປູກພືດບໍ່ສູງ,ຜະລິດແບບທຳມະຊາດ, ຜົນຜະລິດຕ່ຳ
4. ການລ້ຽງສັດໃຫຍ່ຍັງບໍ່ທັນຂະຫຍາຍຕົວ, ສັດຕາຍຍ້ອນພະຍາດເນື່ອງຈາກບໍ່ໄດ້ຮັບການຮັກສາຕາມລະດູການ
5. ພະຍາດສັດລະບາດເລື້ອຍໆ ເຮັດໃຫ້ສັດຕາຍ
6. ເກີດໄພທຳມະຊາດເລື້ອຍໆເຊັ່ນ ແຫ້ງແລ້ງ, ນ້ຳຖ້ວມ
7. ປະຊາຊົນຍັງຖືເບົາບໍ່ເອົາໃຈໃສ່ເບິ່ງແຍງສຸຂະພາບສັດຂອງຕົນ
8. ເຕັກນິກການລ້ຽງສັດຍັງຕ່ຳ, ອາໄສລ້ຽງແບບທຳມະຊາດເປັນສ່ວນໃຫຍ່
9. ພື້ນທີ່ລ້ຽງສັດມີຈຳກັດ
10. ເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານມີຄວາມຫຍຸ້ງຍາກ ໂດຍສະເພາະໃນລະດູຝົນ
11. ຕະຫຼາດຈຳໜ່າຍຜະລິດຕະພັນມີຈຳກັດ
12. ຄົນພິການ,ແມ່ຮ້າງ, ແມ່ໝ້າຍ ແລະຄອບຄົວທຸກຍາກຍັງບໍ່ໄດ້ຮັບການເອົາໃຈໃສ່ຈາກສັງຄົມເທົ່າທີ່ຄວນ
13. ນ້ຳສະອາດຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງຊຸມຊົນ, ຄະນະກຳມະການນ້ຳລິນຍັງບໍ່ທັນເຂັ້ມແຂງ
14. ນ້ຳບໍ່ສະອາດເຊັ່ນ ນ້ຳເປື້ອນມີສານພິດ ເນື່ອງຈາກປະຊາຊົນໃຊ້ສານເຄມີທຳການຜະລິດຢູ່ເທິງແລວນ້ຳ
15. ມີປະຊາຊົນບ້ານອື່ນມາທຳການຜະລິດຢູ່ເຂດບ້ານ ແລະ ນຳໃຊ້ສານເຄມີສຳລັບປູກພືດ ເຮັດໃຫ້ດິນເສື່ອມຄຸນນະພາບ, ຜົນຜະລິດຕ່ຳ
16. ມີການຖາງປ່າຍອດຫ້ວຍ
17. ຂາດແຮງງານໃນການຜະລິດ ແລະ ຂາດທຶນຮອນໃນການປູກຝັງ ແລະ ລ້ຽງສັດ
18. ສັດຕູພືດ ແລະ ພະຍາດພືດລະບາດ